ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

======== ooooo ========

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 001./ອອປສ

ລົງວັນທີ 06/10/ 2011

# ຄຳແນະນຳ

# ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

**ເຖິງ :** ຫົວໜ້າ ອົງການໄອຍະການປະຊາຊົນແຂວງ, ນະຄອນ ແລະ ເຂດ.

**ເລື່ອງ :** ການເຂົ້າຮ່ວມຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີແພ່ງ, ການຄ້າ ຄອບຄົວ ແລະ ເດັກ ຢູ່ສານປະຊາຊົນຂັ້ນຕົ້ນ.

- **ອີງຕາມ** ມາດຕາ 10, 32, 34, 48 ແລະ 49 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009;
- **ອີງຕາມ** ມາດຕາ 54 ຂອງກົດໝາຍວ່າດ້ວຍ ສານປະຊາຊົນ ສະບັບປັບປຸງ ປີ 2009;
- **ອີງຕາມ** ມາດຕາ 37, 38, 39 ແລະ 83 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2004.

ເພື່ອປະຕິບັດສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍຢູ່ສານ ແນໃສ່ເຮັດໃຫ້ການດຳເນີນຄະດີແພ່ງ ເປັນໄປຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ ແລະ ຍຸຕິທຳ ທັງເປັນການປົກປ້ອງສິດຜົນປະໂຫຍດຂອງລັດ, ສັງຄົມ, ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ແລະ ບຸກຄົນທົ່ວໄປ ໃຫ້ມີຄວາມເປັນເອກະພາບ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງມີຄຳແນະນຳໃຫ້ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ແລະ ເຂດ ໃນທົ່ວປະເທດປະຕິບັດດັ່ງນີ້:

1. ໃຫ້ຫົວໜ້າ ອົງການໄອຍະການປະຊາຊົນແຂວງ, ນະຄອນ ແລະ ເຂດ ເຂົ້າຮ່ວມໃນການດຳເນີນຄະດີແພ່ງ, ການຄ້າ, ຄອບຄົວ ແລະ ເດັກ ພ້ອມທັງຕິດຕາມກວດກາການປະຕິບັດກົດໝາຍ ຢູ່ທີ່ປະຊຸມສານຂອງສານປະຊາຊົນຂັ້ນຕົ້ນ;
2. ພະນັກງານໄອຍະການປະຊາຊົນ ທີ່ຈະເຂົ້າຮ່ວມປະຊຸມສານ ຕ້ອງໄດ້ຮັບການແຕ່ງຕັ້ງຈາກຫົວໜ້າອົງການໄອຍະການປະຊາຊົນຂັ້ນຂອງຕົນ ແລະ ແມ່ນຜູ້ທີ່ໄດ້ແຈ້ງລາຍຊື່ໃຫ້ສານປະຊາຊົນຂັ້ນຂອງຕົນຊາບແລ້ວ;

3. ການເຂົ້າຮ່ວມໃນການດຳເນີນຄະດີແພ່ງ ຫຼື ແກ້ໄຂຄະດີແພ່ງ, ການຄ້າ, ຄອບຄົວ ແລະ ເດັກ ຂອງພະນັກງານໄອຍະການປະຊາຊົນແຂວງ, ນະຄອນ ແລະ ເຂດ:

- ກໍລະນີ ທີ່ພົວພັນເຖິງຜົນປະໂຫຍດຂອງລັດ ແລະ ສັງຄົມ ຫຼື ຂອງບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດໃຫ້ປະຕິບັດຕາມມາດຕາ 48 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009;

- ກໍລະນີທີ່ບໍ່ພົວພັນເຖິງຜົນປະໂຫຍດຂອງລັດ ແລະ ສັງຄົມ ຫຼື ຂອງບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ (ແພ່ງທົ່ວໄປ) ພະນັກງານໄອຍະການປະຊາຊົນ ຜູ້ທີ່ໄດ້ຮັບມອບສິດ ໃຫ້ຄົ້ນຄວ້າຄະດີ ຕ້ອງຄົ້ນຄວ້າບົດສະຫຼຸບທີ່ສານສົ່ງມາໃຫ້ ພາຍໃນກຳນົດ 10 ວັນ ແລະ ຕ້ອງກຳເນື້ອໃນຂອງຄະດີໃຫ້ລະອຽດ, ຈຳແນກຂໍ້ມູນຫຼັກຖານຂອງແຕ່ລະຝ່າຍໃຫ້ຈະແຈ້ງເຊັ່ນ: ເອກະສານ ທີ່ຄູ່ຄວາມນຳມາເປັນຫຼັກຖານມີເນື້ອໃນແນວໃດ, ເລກທີ, ລົງວັນທີເທົ່າໃດ ແລະ ຖ້າມີບັນຫາໃດບໍ່ຈະແຈ້ງກໍໃຫ້ບັນທຶກໄວ້ເພື່ອເປັນຂໍ້ມູນໃນການຕິດຕາມກວດກາການໄຕ່ສວນຄະດີ ຢູ່ທີ່ປະຊຸມສານ;

4. ການຖະແຫຼງ:

- ສຳລັບຄະດີງ່າຍ (ບໍ່ມີຄວາມຫຍຸ້ງຍາກສັບສົນ) ກໍບໍ່ຈຳເປັນທີ່ຈະຕ້ອງຖະແຫຼງເປັນລາຍລັກອັກສອນ, ແຕ່ຕ້ອງເຂົ້າຮ່ວມປະຊຸມສານ ເພື່ອຕິດຕາມກວດກາການປະຕິບັດກົດໝາຍຢູ່ທີ່ປະຊຸມສານຂອງຄະນະສານ ແລະ ໃຫ້ຄຳຖະແຫຼງທາງປາກເປົ່າ ຕໍ່ທີ່ປະຊຸມສານທຸກຄັ້ງ (ສຳລັບວິທີການຖະແຫຼງແມ່ນໄດ້ຂັດຕິດມາພ້ອມນີ້);

- ສຳລັບຄະດີທີ່ມີຄວາມຫຍຸ້ງຍາກສັບສົນ ຕ້ອງຖະແຫຼງເປັນລາຍລັກອັກສອນ ແລະ ສົ່ງຄຳຖະແຫຼງໃຫ້ສານ, ແຕ່ຖ້າເຫັນວ່າ ບົດສະຫຼຸບທີ່ສານສົ່ງມາໃຫ້ບໍ່ຈະແຈ້ງກໍໃຫ້ປະສານສົມທົບຄືນ ເພື່ອເບິ່ງຂໍ້ມູນຫຼັກຖານ, ອັດສຳເນົາ ຫຼື ຈົດກ່າຍເອົາເອກະສານ ທີ່ກ່ຽວຂ້ອງໃນສຳນວນຄະດີ ພ້ອມທັງເຂົ້າຮ່ວມປະຊຸມສານ ເພື່ອຖະແຫຼງ ແລະ ຕິດຕາມກວດກາການໄຕ່ສວນຄະດີໃນທີ່ປະຊຸມສານ;

5. ການເຂົ້າຮ່ວມຂອງພະນັກງານໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍຢູ່ທີ່ປະຊຸມສານ ຂອງສານປະຊາຊົນຂັ້ນຕົ້ນ:

**- ທຸກກໍລະນີ ຂອງການເຂົ້າຮ່ວມປະຊຸມສານ ຂອງພະນັກງານໄອຍະການປະຊາຊົນ ຕ້ອງນັ່ງຢູ່ບ່ອນນັ່ງປະຈຳຂອງໄອຍະການປະຊາຊົນ ຕາມລະບຽບການຂອງສານປະຊາຊົນວາງອອກ;**

- ທຸກກໍລະນີ ບໍ່ວ່າຄະດີນັ້ນຈະພົວພັນ ຫຼື ບໍ່ພົວພັນເຖິງຜົນປະໂຫຍດຂອງລັດ ແລະ ສັງຄົມ ຫຼື ຂອງບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດກໍຕາມ ພະນັກງານໄອຍະການປະຊາຊົນຕ້ອງເຂົ້າຮ່ວມເພື່ອຕິດຕາມກວດກາການປະຕິບັດກົດໝາຍຢູ່ທີ່ປະຊຸມສານ ( ສ່ວນລາຍລະອຽດ ຂອງການຕິດຕາມກວດກາແມ່ນໄດ້ຂັດຕິດມາພ້ອມນີ້);

- ການເຂົ້າຮ່ວມປະຊຸມສານທຸກຄັ້ງ ຕ້ອງມີປຶ້ມບັນທຶກຢ່າງລັກແນ່ ແລະ ຢູ່ໃນປຶ້ມບັນທຶກດັ່ງກ່າວຄວນໃຫ້ຈ່າສານເຊັນຮ່ວມນຳ(ເນື້ອໃນຂອງປຶ້ມບັນທຶກການເຂົ້າຮ່ວມປະຊຸມສານແມ່ນໄດ້ຂັດຕິດມາພ້ອມນີ້);

6. ໃນທີ່ປະຊຸມສານຖ້າເຫັນວ່າ ສານປະຕິບັດບໍ່ຖືກຕ້ອງຕາມກົດໝາຍ ພະນັກງານໄອຍະການປະຊາຊົນ